**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

--------------------

**ນາຍົກລັດຖະມົນຕີ**

ເລກທີ...43.... ..../ນຍ

ນະຄອນຫຼວງວຽງຈັນ, ວັນທີ....18.05.2017

# ຂໍ້ຕົກລົງ

## ວ່າດ້ວຍການແຕ່ງຕັ້ງຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ

- ອີງຕາມກົດໝາຍວ່າດ້ວຍລັດຖະບານ ແຫ່ງ ສປປ ລາວ (ສະບັບປັບປຸງ) ເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016.
- ອີງຕາມກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ ທີ່ໄດ້ປະກາດໃຊ້ຕາມດຳລັດຂອງປະທານປະເທດ ສະບັບເລກທີ 019/ປປທ,ລົງວັນທີ 28 ມັງກອນ 2016.
- ອີງຕາມດຳລັດວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວຂອງຄະນະຊີ້ນຳລະດັບຊາດຕ້ານການຄ້າມະນຸດ ສະບັບເລກທີ 156/ນຍ,ລົງວັນທີ 08 ກັນຍາ 2008.
- ອີງຕາມແຈ້ງການສະບັບເລກທີ 586/ຫສນຍ.ກລຂ, ລົງວັນທີ 12 ເມສາ 2017 ວ່າດ້ວຍການແຕ່ງຕັ້ງປະທານຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ.
- ອີງຕາມເອກະສານສະເໜີ ສະບັບເລກທີ 022/ຄຕມຊ, ລົງວັນທີ 10 ພຶດສະພາ 2017 ຂອງຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ.

## ນາຍົກລັດຖະມົນຕີ ຕົກລົງ :

**ມາດຕາ 1.** ແຕ່ງຕັ້ງຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ ຊຶ່ງປະກອບມີບັນດາທ່ານ ດັ່ງນີ້:

1. ທ່ານ ຮອງນາຍົກລັດຖະມົນຕີ ເປັນປະທານ.
2. ທ່ານ ລັດຖະມົນຕີກະຊວງປ້ອງກັນຄວາມສະຫງົບ ເປັນຮອງປະທານ ແລະ ທັງເປັນຜູ້ປະຈຳການ.
3. ທ່ານ ຮອງລັດຖະມົນຕີກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນຮອງປະທານ.
4. ທ່ານ ຮອງປະທານສູນກາງສະຫະພັນແມ່ຍິງລາວ ເປັນຮອງປະທານ.
5. ທ່ານ ຮອງລັດຖະມົນຕີກະຊວງການຕ່າງປະເທດ ເປັນຮອງປະທານ.
6. ທ່ານ ຮອງລັດຖະມົນຕີ, ຮອງຫົວໜ້າຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ ເປັນກຳມະການ.
7. ທ່ານ ຮອງລັດຖະມົນຕີກະຊວງຍຸຕິທຳ ເປັນກຳມະການ.
8. ທ່ານ ຮອງລັດຖະມົນຕີກະຊວງສຶກສາທິການ ແລະ ກິລາ ເປັນກຳມະການ.

9. ທ່ານ ຮອງລັດຖະມົນຕີກະຊວງສາທາລະນະສຸກ ເປັນກຳມະການ.

10. ທ່ານ ຮອງລັດຖະມົນຕີກະຊວງຖະແຫຼງຂ່າວ,ວັດທະນະທຳ ແລະ ທ່ອງທ່ຽວ ເປັນກຳມະການ.

11. ທ່ານ ຮອງເລຂາຄະນະບໍລິຫານງານສູນກາງຊາວໜຸ່ມປະຊາຊົນປະຕິວັດລາວ ເປັນກຳມະການ.

12. ທ່ານ ຮອງປະທານສູນກາງສະຫະພັນກຳມະບານລາວ ເປັນກຳມະການ.

13. ທ່ານ ຮອງຫົວໜ້າກົມໃຫຍ່ຕຳຫຼວດ, ກະຊວງປ້ອງກັນຄວາມສະຫງົບ ຜູ້ຊີ້ນຳວຽກງານຕ້ານການຄ້າມະນຸດ ເປັນກຳມະການ ທັງເປັນຫົວໜ້າກອງເລຂາ.

**ມາດຕາ 2.** ຄະນະກຳມະການຕ້ານການຄ້າມະນຸດລະດັບຊາດ, ປະທານ ແລະ ຮອງປະທານ ມີສິດ ແລະ ໜ້າທີ່ ຕາມທີ່ໄດ້ກຳນົດໄວ້ໃນພາກທີ IV ໝວດທີ 1 ແລະ ມາດຕາ 57 ຂອງກົດໝາຍວ່າດ້ວຍການຕ້ານການຄ້າມະນຸດ.

**ມາດຕາ 3** ບັນດາກະຊວງ, ອົງການລັດທຽບເທົ່າກະຊວງ, ນະຄອນຫຼວງວຽງຈັນ, ບັນດາແຂວງ ແລະ ທຸກພາກສ່ວນທີ່ກ່ຽວຂ້ອງ ພ້ອມດ້ວຍບັນດາທ່ານທີ່ຖືກແຕ່ງຕັ້ງ ຈົ່ງຮັບຮູ້, ໃຫ້ຄວາມຮ່ວມມື ແລະ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ໃຫ້ໄດ້ຮັບຜົນດີ.

**ມາດຕາ 4** ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ ແລະ ປ່ຽນແທນຂໍ້ຕົກລົງ ສະບັບເລກທີ 23/ນຍ, ລົງວັນທີ 5 ມີນາ 2014.

**ນາຍົກລັດຖະມົນຕີ**

ນາຍົກລັດຖະມົນຕີ

ທອງລຸນ ສີສຸລິດ